# ຜນວກ ฉ
## ການພົວພັນຮ່ວມມືລາວ-ຈີນ
## (ความสัมพันธ์ลาว-จีน)

## I. ສັງເຂບ ກ່ຽວກັບ ສປ ຈີນ :

### 1. ຂໍ້ມູນດ້ານພູມສາດ :

ສາທາລະນະລັດ ປະຊາຊົນຈີນ ສະຖາປະນາຂຶ້ນໃນວັນທີ 01/10/1949 ມີທີ່ຕັ້ງຢູ່ພາກຕາເວັນອອກຂອງແຜ່ນດິນໃຫຍ່ທະວີບອາຊີ ແລະ ຝັ່ງຕາເວັນຕົກຂອງມະຫາສະມຸດປາຊີຟິກ. ເນື້ອທີ່ທາງບົກປະມານ 9,6 ລ້ານ ກິໂລແມັດມົນທົນ, ເປັນປະເທດໃຫຍ່ອັນດັບ 3 ຂອງໂລກ ຖັດຈາກລັດເຊຍ ແລະ ການາດາ. ໄລຍະຫ່າງຂອງແຜ່ນດິນ ແຕ່ເໜືອຫາໃຕ້ ຍາວປະມານ 5.500 ກິໂລແມັດ, ຕາເວັນອອກຫາຕາເວັນຕົກ ປະມານ 5.200 ກິໂລແມັດ.

ເສັ້ນຊາຍແດນທາງບົກຂອງປະເທດຈີນ ຍາວເຖິງ 20.800 ກິໂລແມັດ, ມີຊາຍແດນຕິດກັບ ສປປ ເກົາຫລີ, ມົງໂກນ, ລັດເຊຍ, ກາຊັກສະຖານ, ກຽກກີຊີສະຖານ, ຕາຊີກີສະຖານ, ອັບການິສະຖານ, ປາກີສະ ຖານ, ອິນເດຍ, ເນປານ, ບູຕັງ, ມຽນມາ, ລາວ, ຫວຽດນາມ. ມີເນື້ອທີ່ທະເລປະມານ 4,73 ລ້ານ ກິໂລແມັດ ມົນທົນ, ມີຊາຍຝັ່ງຍາວປະມານ 18.000 ກິໂລແມັດ, ກວມເອົາເກາະດອນ 5.400 ກວ່າເກາະ. ໃນນັ້ນ, ເກາະທີ່ໃຫຍ່ກວ່າໝູ່ແມ່ນເກາະໄຕຫວັນ, ເນື້ອທີ່ 36.000 ກິໂລແມັດມົນທົນ; ຖັດມາແມ່ນເກາະຮາຍນານ ເນື້ອທີ່ 34.000 ກິໂລແມັດມົນທົນ.

ທົ່ວປະເທດຈີນໄດ້ຈັດແບ່ງເປັນ 23 ແຂວງ, 5 ເຂດປົກຄອງຕົນເອງ, 4 ກຳແພງນະຄອນ, 2 ເຂດບໍລິ ຫານພິເສດ ຄື : ຮົງກົງ ແລະ ມາກາວ ເຊິ່ງເປັນຂົງເຂດບໍລິຫານທ້ອງຖິ່ນ ທີ່ຂຶ້ນກັບລັດຖະບານກາງໂດຍກົງ. ໂດຍມີ ປັກກິ່ງ ເປັນນະຄອນຫລວງຂອງປະເທດ.

ຈີນ ເປັນປະເທດທີ່ມີປະຊາກອນຫລາຍກວ່າໝູ່ໃນໂລກ. ທ້າຍປີ 2004 ປະຊາກອນ ລວມຂອງຈີນ ແມ່ນ 1.299.880.000 ຄົນ (ບໍ່ນັບປະຊາກອນຂອງຮົງກົງ, ມາກາວ ແລະ ແຂວງ ໄຕຫວັນ). ຄວາມໜາ ແໜ້ນສະເລ່ຍ 135 ຄົນຕໍ່ກິໂລແມັດມົນທົນ, ແຕ່ການແຜ່ກະຈາຍແມ່ນ ບໍ່ສະໝ່ຳສະເໝີ, ເຂດແຄມທະເລ ພາກຕາເວັນອອກ ສະເລ່ຍ 400 ກວ່າຄົນຕໍ່ກິໂລແມັດ ມົນທົນ; ເຂດພາກກາງສະເລ່ຍ 200 ກວ່າຄົນຕໍ່ກິໂລ ແມັດມົນທົນ; ເຂດພູພຽງພາກຕາເວັນຕົກ ມີປະຊາກອນຢູ່ຢ່າງເບົາບາງ ສະເລ່ຍບໍ່ເຖິງ 10 ຄົນຕໍ່ກິໂລແມັດ ມົນທົນ.

ສປ ຈີນ ປະກອບດ້ວຍ 56 ຊົນເຜົ່າ. ໃນນັ້ນ, ຊົນເຜົ່າຮ້ານ ມີປະຊາກອນຫຼາຍກວ່າໝູ່ ກວມ 91,6% ຂອງທົ່ວປະເທດ, ສ່ວນ 55 ຊົນເຜົ່າທີ່ເຫລືອນັ້ນ ມັກເອີ້ນເປັນເອກະພາບວ່າ: ຊົນເຜົ່າສ່ວນໜ້ອຍ. ຕາມ ສະຖິຕິປີ 2000, ໃນ 55 ຊົນເຜົ່າສ່ວນໜ້ອຍນັ້ນ ຊົນເຜົ່າທີ່ມີປະຊາກອນ 1 ລ້ານຄົນຂຶ້ນໄປ ມີ 18 ຊົນເຜົ່າ ເຊັ່ນ : ຊົນເຜົ່າຈ້ວງ, ຊົນເຜົ່າມານ, ຊົນເຜົ່າຫຸຍ, ຊົນເຜົ່າມົ້ງ, ຊົນເຜົ່າວູຍອີ ... ເປັນຕົ້ນ.

### 2. ລະບອບການເມືອງ :

ຢູ່ປະເທດຈີນອຳນາດທັງໝົດເປັນຂອງປະຊາຊົນ. ອົງການທີ່ປະຊາຊົນປະຕິບັດອຳນາດແຫ່ງລັດແມ່ນ ສະພາຜູ້ແທນປະຊາຊົນທົ່ວປະເທດ ແລະ ສະພາຜູ້ແທນປະຊາຊົນຂັ້ນຕ່າງໆຂອງທ້ອງຖິ່ນ. ດັ່ງນັ້ນ, ລະບອບສະພາຜູ້ແທນປະຊາຊົນ ໄດ້ກາຍເປັນລະບອບການເມືອງຕົ້ນຕໍຂອງຈີນ. ຈຸດພິເສດພື້ນຖານຂອງມັນ ຄື : ມີລັກສະນະຕົວແທນຢ່າງກວ້າງຂວາງ, ເປັນຮູບການພື້ນຖານຂອງປະຊາຊົນຄຸ້ມຄອງປະເທດ; ປະຕິບັດຫລັກການລະບອບລວມສູນປະຊາທິປະໄຕ, ທັງຮັບປະກັນປະຊາຊົນໄດ້ຊົມໃຊ້ປະຊາທິປະໄຕ ແລະ ສິດຜົນປະໂຫຍດຢ່າງກວ້າງຂວາງ, ຍັງຮັບປະກັນການປະຕິບັດອຳນາດລັດດ້ວຍການລວມສູນ ແລະ ເປັນເອກະພາບ; ສະພາຜູ້ແທນປະຊາຊົນປະຕິບັດອຳນາດລັດຢ່າງເປັນເອກະພາບ, ໄດ້ຈັດແບ່ງອອກເປັນອຳນາດບໍລິຫານຂອງລັດ, ອຳນາດການພິພາກສາ, ອຳນາດໄອຍະການ ແລະ ອຳນາດນຳພາຂອງກຳລັງປະກອບອາວຸດ ຢ່າງຈະແຈ້ງ, ເຊິ່ງເຮັດໃຫ້ ອົງການກຳອຳນາດຂອງລັດ ສາມາດເຮັດວຽກດ້ວຍການປະສານງານຢ່າງເປັນ ເອກະພາບ ນຳກັນ.

ຮູບການຕົ້ນຕໍທີ່ນຳໃຊ້ການຮ່ວມມືຫຼາຍພັກເຊິ່ງປະຈຸບັນມີເຖິງ 08 ພັກ, ແຕ່ພັກການເມືອງເຫຼົ່ານັ້ນບໍ່ເຄີຍເປັນພັກຝ່າຍຄ້ານ ນັ້ນກໍ່ເພື່ອການປຶກສາການເມືອງ ເຊິ່ງມີ 2 ປະເພດຄື: 1. ແມ່ນສະພາປຶກສາການ ເມືອງປະຊາຊົນຈີນ; 2. ແມ່ນກອງປະຊຸມປຶກສາຫາລື, ກອງປະຊຸມສຳມະນາກັບຜູ້ຊົງຄຸນວຸດທິພັກຝ່າຍ ປະຊາທິປະໄຕ ແລະ ຜູ້ບໍ່ສັງກັດພັກການເມືອງ ທີ່ສູນກາງພັກກອມມູນິດຈີນ ແລະ ຄະນະພັກທ້ອງຖິ່ນແຕ່ລະ ຂັ້ນຈັດຂຶ້ນ. ສະພາປຶກສາ ການເມືອງປະຊາຊົນແຫ່ງປະເທດຈີນ ເຖິງວ່າເປັນອົງການທີ່ບໍ່ຂຶ້ນກັບອົງການຈັດ ຕັ້ງຂອງລັດ ແລະ ແຕກຕ່າງກັບອົງການຈັດຕັ້ງສັງຄົມທົ່ວໄປ, ແຕ່ກໍ່ເປັນອົງການຈັດຕັ້ງ ແນວໂຮມເອກະພາບ ຮັກຊາດທີ່ກວ້າງຂວາງທີ່ສຸດຂອງປະຊາຊົນຈີນ.

### 3. ດ້ານເສດຖະກິດຂອງຈີນ :

ກ່ອນສາທາລະນະລັດ ປະຊາຊົນຈີນໄດ້ສະຖາປະນາຂຶ້ນໃນປີ 1949, ເສດຖະກິດ ຫລ້າຫລັງທີ່ສຸດ. ປະຈຸບັນ, ຈີນໄດ້ກາຍເປັນ 1 ໃນປະເທດໃຫຍ່ທາງເສດຖະກິດທີ່ມີກຳລັງ ບົ່ມຊ້ອນຂອງການພັດທະນາທີ່ສຸດຂອງໂລກ, ຊີວິດການເປັນຢູ່ຂອງປະຊາຊົນ ກໍບັນລຸເຖິງ ລະດັບພໍຢູ່ພໍກິນ, ໂດຍສະເພາະແມ່ນພາຍຫລັງມີ ການປະຕິຮູບ ແລະ ເປີດປະຕູສູ່ພາຍນອກ ໃນປີ 1979 ເປັນຕົ້ນມາ, ເສດຖະກິດຂອງຈີນໄດ້ຮັບການພັດທະ ນາຢ່າງວ່ອງໄວທີ່ບໍ່ເຄີຍມີມາ ກ່ອນ; ກ້າວເຂົ້າສູ່ສະຕະວັດທີ່ 21, ເສດຖະກິດຂອງຈີນ ຍັງສືບຕໍ່ຮັກສາການ ເພີ່ມຂຶ້ນດ້ວຍ ບາດກ້າວຄວາມໄວສູງ ແລະ ໝັ້ນທ່ຽງ. ຍອດມູນຄ່າການຜະລິດພາຍໃນປະເທດ ຂອງປີ 2005 ບັນລຸເຖິງ 18.232 ຕື້ 100 ລ້ານຢວນ, ເພີ່ມຂຶ້ນກວ່າປີທີ່ແລ້ວ 9,9%.

ໃນປີ 1987 ລັດຖະບານຈີນໄດ້ວາງເປົ້າໝາຍການສ້າງສາເສດຖະກິດຂອງຈີນໂດຍ ແບ່ງເປັນ 3 ບາດກ້າວຄື: ເປົ້າໝາຍກ້າວທີ 1: ເຮັດໃຫ້ຍອດມູນຄ່າການຜະລິດແຫ່ງຊາດ ສົມທຽບກັບປີ 1980

ເພີ່ມຂຶ້ນ 1 ເທົ່າຕົວ, ແກ້ໄຂບັນຫາກິນອີ່ມນຸ່ງອຸ່ນຂອງປະຊາຊົນ ໃນຊຸມປີ 1980 ໄດ້ໂດຍພື້ນຖານ; ເປົ້າໝາຍກ້າວທີ 2: ຮອດທ້າຍສະຕະວັດທີ່ 20 ຍອດ ມູນຄ່າການ ຜະລິດ ແຫ່ງຊາດ ສົມທຽບກັບປີ 1980 ເພີ່ມຂຶ້ນ 2 ເທົ່າຕົວ, ອັນນີ້ກໍໄດ້ສຳເລັດກ່ອນຄາດໝາຍ ໃນປີ 1995 ; ເປົ້າໝາຍກ້າວທີ 3: ຮອດກາງສະຕະວັດທີ່ 21 ເຮັດໃຫ້ ການຫັນເປັນແບບ ທັນສະໄໝປະກົດຜົນເປັນຈິງໂດຍພື້ນຖານ, ຍອດມູນຄ່າການຜະລິດແຫ່ງຊາດສະເລ່ຍໃສ່ຫົວຄົນບັນລຸເຖິງລະດັບປານກາງຂອງປະເທດທີ່ພັດທະນາ, ປະຊາຊົນໄດ້ດຳລົງຊີວິດ ຂ້ອນຂ້າງຮັ່ງມີ ແລະ ອຸດົມສົມບູນ.

ການພັດທະນາເສດຖະກິດຂອງຈີນ ແມ່ນປະກົດເປັນຈິງດ້ວຍຜ່ານການປະຕິບັດ " ແຜນການ 5 ປີ " ເຊິ່ງປະຈຸບັນ, ລັດຖະບານຈີນພວມປະຕິບັດແຜນການ 5 ປີ ຄັ້ງທີ 11 (ປີ 2006-2010).

## 4. ສະພາບການພາຍໃນຂອງຈີນ :

- **ບັນຫາໄຕ້ຫວັນ** : ເຊິ່ງເປັນບັນຫາປະຫວັດສາດ ທີ່ຕົກທອດມາຕັ້ງແຕ່ໄລຍະການຕໍ່ສູ້ເພື່ອສະຖາປະນາສປ ຈີນ, ໄຕ້ຫວັນເຖິງແມ່ນວ່າຈະຖືເປັນແຂວງໜຶ່ງຂອງສປ ຈີນ ແຕ່ຕະຫຼອດໄລຍະທີ່ຜ່ານມາ ອິດທິກຳລັງແບ່ງແຍກໄຕ້ຫວັນອອກເປັນເອກະລາດກໍ່ຍັງສືບຕໍ່ເຄື່ອໄຫວເພື່ອສ້າງການຢ່າງບໍ່ຫຼຶດລະ. ໂດຍສະເພາະບໍ່ພໍເທົ່າໃດປີມານີ້ພາຍໄຕ້ການສະໜັບສະໜູນທາງກົງແລະ ທາງອ້ອມຂອງພາຍນອກ ແລະ ກະໂຕຂອງອຳນາດການປົກຄອງ ຂອງໄຕ້ຫວັນເອງ ກໍໄດ້ເຄື່ອນໄຫວຢ່າງພິດເດືອດ ແລະ ນັບມື້ນັບເປັນຮູບ ປະທຳ. ໃນວັນທີ 27 ກຸມພາ 2006 ເສິນ ສຸຍປຽນ ຜູ້ນຳໄຕ້ຫວັນ ໄດ້ປະກາດຢຸດຕິການປະຕິບັດງານຂອງ "ຄະນະກຳມະການເຕົ້າໂຮມປະເທດເປັນເອກະພາບ" ແລະ ການນຳໃຊ້ "ທິດທາງເພື່ອເຕົ້າໂຮມປະເທດເປັນເອກະພາບ "ເຊິ່ງເປັນການກະທຳຢ່າງເປີດແປນແລະ ເຮັດໃຫ້ສະພາບການຂອງສອງຝັ່ງໄຕ້ຫວັນ ມີຄວາມເຄັ່ງຕຶງທີ່ສຸດ. ຈີນເຖິງປະຈຸບັນ ສະພາບຄວາມເຄັ່ງຕຶງດັ່ງກ່າວ ກໍ່ຍັງບໍ່ມີທ່າທີວ່າຈະໄດ້ຮັບການແກ້ ໄຂໂດຍດີ, ເສິນສຸຍປຽນຍັງຄົງປະຕິເສດທີ່ຈະຮ່ວມມືກັບລັດຖະບານປັກກິ່ງ ແລະ ການຫັນໜ້າເຂົ້າສູ່ໂຕະ ເຈລະຈາ ເຖິງແມ່ນວ່າການກະທຳດັ່ງກ່າວຈະຖືກສຽງກ່າວປະນາມຈາກວົງຄະນະຍາດສາກົນກໍ່ຕາມ.

- **ບັນຫາຕິເບດ :** ດາລາຍລາມະ ເຊິ່ງເປັນຜູ້ປົກຄອງຕິເບດ ໃນສະໄໝທີ່ຕິເບດມີຜູ້ນຳທາງດ້ານສາ ສະໜາເປັນຜູ້ປົກຄອງເຂດ ເມື່ອກ່ອນນັ້ນ ຍັງຄົງສືບຕໍ່ເຄື່ອນໄຫວ ເພື່ອມຸ້ງຫວັງຢາກກັບມາກຳອຳນາດຄືນ, ຫຼ້າສຸດ ໄດ້ມີຂ່າວວ່າ ດາລາຍລາມະ ໄດ້ສ້າງຕັ້ງສຳນັກງານ ຫຼາຍແຫ່ງຢູ່ບັນດາປະເທດທີ່ຕິດກັບ ຕິເບດ ເຊັ່ນ: ເນປານ ເປັນຕົ້ນ ໂດຍໃຊ້ສາສະໜາ ເປັນເຄື່ອງບັງໜ້າເພື່ອຂົນຂວາຍໃຫ້ປະຊາຊົນຈີນ ແລະ ຕ່າງ ປະເທດ ຫັນມາສະໜັບສະໜູນ ຕົນເອງຄືນໃໝ່. ຜູ້ນຳຂອງຈີນ ໄດ້ອອກມາກ່າວປະນາມການກະທຳດັ່ງກ່າວ ຫຼາຍຄັ້ງ ແລະ ຮຽກຮ້ອງໃຫ້ ດາລາຍລາມະ ຢຸດເຊົາການເຄື່ອນໄຫວດັ່ງກ່າວ ແຕ່ຈີນເຖິງປະຈຸບັນ ສະພາບ ຄວາມເຄັ່ງຕຶງດັ່ງກ່າວ ກໍ່ຍັງຄົງສືບຕໍ່.

5. **ການພົວພັນຮ່ວມມືກັບຕ່າງປະເທດຂອງຈີນ :**

ໄລຍະຊຸມປີຜ່ານມາ, ສປ ຈີນ ໄດ້ອອກແຮງເຄື່ອນໄຫວການຕ່າງປະເທດຢ່າງຕັ້ງໜ້າ ເພື່ອເສີມຂະຫຍາຍບົດບາດ ແລະຖານະຂອງຕົນໃນເວທີສາກົນໃຫ້ສູງຂື້ນເລື້ອຍໆ, ໂດຍໃຫ້ຄວາມສຳຄັນອັນເປັນປົກກະຕິກັບອາເມລິກາ ແລະ ເພີ່ມທະວີການພົວພັນຮ່ວມມືຫຼາຍດ້ານ ກັບບັນດາປະເທດໃກ້ຄຽງ ແລະ ພາກພື້ນ ຕ່າງໆ ໂດຍສະເພາະດ້ານພະລັງງານ ຈີນໄດ້ເພີ່ມທະວີການຮ່ວມມືກັບບັນດາປະເທດ ເພື່ອໃຫ້ມີສ່ວນຮ່ວມ ໃນບັນດາເຂດທີ່ເປັນແຫຼ່ງ ພະລັງງານໃຫຍ່ຂອງໂລກ.

- ຕໍ່ກັບ ຍີ່ປຸ່ນບັນຫາປະຫວັດສາດຂອງສອງປະເທດຍັງຄົງເຄັ່ງຕຶງເປັນຕົ້ນ: ປື້ມແບບຮຽນ ປະຫວັດສາດຂອງຍີ່ປຸ່ນ, ສປ.ຈີນ ໄດ້ສະແດງທ່າທີຂັດຄ້ານຢ່າງແຂງແຮງຕໍ່ການທີ່ຜູ້ນຳ ຂອງຍີ່ປຸ່ນ ບໍ່ຢຸດເຊົາການໄປສະກາລະບູຊາ ສານເຈົ້າຢາຊຸກູນິ ເຊິ່ງຈີນຖືວ່າ ເປັນສຸສານຂອງ ບັນດາອາຊະຍາກຳ ທີ່ກໍ່ກຳທຳເຂັນໃຫ້ແກ່ປະຊາຊົນຈີນໃນປາງສົງຄາມໂລກຄັ້ງທີ 2 ແລະ ປະກາດເລື່ອນການຢ້ຽມຢາມ ສປ.ຈີນ ຂອງນາຍົກຍີ່ປຸ່ນ ໄປຢ່າງບໍ່ມີກຳນົດ, ບັນຫາບໍ່ນ້ຳມັນ ໃນເຂດທະເລທີ່ເປັນເສັ້ນຊາຍແດນລະຫວ່າງຈີນ ແລະ ຍີ່ປຸ່ນອີກນຳ.
- ດ້ານຄວາມໝັ້ນຄົງຂອງພາກພື້ນ ສປ.ຈີນ ກໍ່ໄດ້ຫຼີ້ນບົດບາດທີ່ສຳຄັນ ໂດຍສະເພາະ ບັນຫາປະລາມະນູໃນແຫຼມເກົາຫຼີ ສປ.ຈີນ ໄດ້ກະຕຸກຊຸກຍູ້ ໃຫ້ບັນດາຝ່າຍ ກັບຄືນສູ່ໂຕະ ເຈລະຈາ 6 ຝ່າຍ ເຊິ່ງຈັດຂື້ນ ທີ່ປັກກິ່ງ, ບັນຫາການປະຕິຮູບສະພາຄວາມໝັ້ນຄົງຂອງ ສປຊ, ບັນຫານິວເຄຼຍຂອງອີຣານ ແລະ ອື່ນໆ ເຊິ່ງ ສປ ຈີນ ກໍ່ນັບມື້ນັບມີບົດບາດຫຼາຍຂື້ນ.
- ກັບລັດເຊຍ : ສອງປະເທດ ໄດ້ເຊັນສັນຍາ " ການຮ່ວມມືມິດຕະພາບຖານບ້ານໃກ້ ເຮືອນຄຽງ ລະ ຫວ່າງສອງປະເທດ ຈີນ - ລັດເຊຍ " ໃນວັນທີ 16 ກໍລະກົດ 2001, ໂດຍແມ່ນ ທ່ານ ປະທານ ຈຽງ ເຈີມິນ ແລະທ່ານ ປະທານາທິບໍດີປູຕິນຂອງລັດເຊຍຮ່ວມລົງນາມນຳກັນ. ສັນຍາດັ່ງກ່າວໄດ້ເປັນເອກະສານ ສຳຄັນ ໃນການວາງແນວທາງການຮ່ວມມື ລະຫວ່າງ ຈີນ ແລະ ລັດເຊຍ ໃນອະນາຄົດ.
- ດ້ານການຄ້າ, ຈີນ ໄດ້ເຊັນສັນຍາ ຊື້ຍົນແອບັດສ ຈຳນວນ 150 ລຳ ນຳ ບໍລິສັດ ແອບັດສ ເຊິ່ງເປັນບໍລິສັດຜະລິດຍົນຍັກໃຫຍ່ຂອງຝຣັ່ງ ແລະ ໄດ້ກາຍເປັນລູກຄ້າລາຍໃຫຍ່ ຂອງ ບໍລິສັດແອບັດສ ແລະເປັນກ້ອນທຶນນຶ່ງທີ່ເຮັດໃຫ້ບໍລິສັດ ດັ່ງກ່າວ ຍັງຄົງເປັນຄູ່ແຂ່ງທີ່ສຳຄັນ ຂອງບໍລິສັດໂບອີງຂອງອາເມລິກາ. ນອກນັ້ນ, ຈີນຍັງໄດ້ເຊັນສັນຍາກັບຫຼາຍປະເທດ ໃນການ ນຳ ສິນຄ້າ ເຂົ້າສູ່ຕະຫຼາດຈີນ.

## II. ການພົວພັນລາວ-ຈີນ :

1. **ປະຫວັດສາດການພົວພັນລາວ-ຈີນໂດຍຫຍໍ້ :**

ລາວ ແລະ ຈີນ ເປັນປະເທດບ້ານໃກ້ເຮືອນຄຽງທີ່ມີພູຜາປ່າໄມ້ ແລະ ແມ່ນ້ຳລຳເຊ ຕິດຈອດກັນ, ປະຊາຊົນສອງຊາດລາວ-ຈີນ ມີມູນເຊື້ອໄປມາຫາສູ່, ຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະກັນມາແຕ່ບູຮານ ນະການ. ສອງປະເທດໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 25 ເມສາ 1961, ດ້ວຍຄວາມພະຍາຍາມຮ່ວມກັນຂອງທັງສອງຝ່າຍ ສາຍພົວພັນທີ່ເປັນມູນເຊື້ອອັນດີງາມດັ່ງກ່າວ ໄດ້ຮັບການເສີມຂະຫຍາຍ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ນັບມື້ນັບເລິກເຊິ່ງ. ໃນສະໄໝການປະຕິວັດ ປົດປ່ອຍຊາດ

ແລະ ຕ້ານການ ຮຸກຮານ ຈາກພາຍນອກ, ສປ ຈີນ ກໍ່ໄດ້ໃຫ້ການຊ່ວຍເຫຼືອຢ່າງ ມະຫາສານ ແກ່ ສປປ ລາວເຊິ່ງພັກ, ລັດຖະ ບານ ແລະ ປະຊາຊົນລາວຍາມໃດກໍ່ຮູ້ບຸນຄຸນ ຕໍ່ການຊ່ວຍເຫຼືອອັນລ້ຳຄ່າ ດັ່ງກ່າວ.

ໄລຍະທ້າຍຊຸມປີ 70 ຫາ ກາງ 80 ການພົວພັນສອງປະເທດ ໄດ້ປະສົບກັບສິ່ງທ້າທາຍ ທີ່ລະອິດລະອຽວອັນເນື່ອງຈາກຜົນສະທ້ອນຂອງສະພາບການສາກົນທີ່ມີຄວາມສັບສົນ,ແຕ່ຮອດ ປີ 1989 ສອງປະເທດ ກໍ່ໄດ້ຟື້ນຟູສາຍພົວພັນອັນເປັນປົກກະຕິນຳກັນຄືນໃໝ່.

ນັບແຕ່ນັ້ນເປັນຕົ້ນມາ ການພົວພັນ ແລະ ຮ່ວມມືລາວ-ຈີນ ໄດ້ມີບາດກ້າວກະໂດດໃໝ່, ຂະຫຍາຍ ຕົວຢ່າງວ່ອງໄວ ແລະ ຫຼາຍຂົງເຂດເຊັ່ນ : ການເມືອງ, ເສດຖະກິດ, ວັດທະນະທຳ ແລະ ອື່ນໆ.. ກ້າວຂຶ້ນເປັນການພົວພັນແລະຮ່ວມມືຮອບດ້ານນຳກັນ. ການແລກປ່ຽນການຢ້ຽມຢາມໃນລະດັບການ ນຳຂັ້ນສູງ ຂອງພັກ, ລັດ, ຂະແໜງການຕ່າງໆ ຕະຫຼອດຮອດລະດັບ ທ້ອງຖິ່ນ ແລະ ນັກທຸລະກິດ ໄດ້ເພີ່ມທະວີຂຶ້ນ.

ສປປ ລາວ ຍຶດໝັ້ນສະໜັບສະໜູນ ນະໂຍບາຍປະເທດຈີນດຽວ, ຄັດຄ້ານທຸກເຈດ ຈຳນົງທີ່ມຸ້ງຫວັງ ສ້າງ “ ສອງປະເທດຈີນ ” ຫຼື “ ນຶ່ງຈີນນຶ່ງໄຕ້ຫວັນ ”, ສະໜັບສະໜູນ ພາລະກິດທ້ອນໂຮມປະເທດໂດຍ ສັນຕິວິທີຂອງປະຊາຊົນຈີນ. ສປ ຈີນ ເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງ ສປປ ລາວ, ສະໜັບສະໜູນພັກ, ລັດ ແລະປະຊາຊົນລາວໃນການຍຶດໝັ້ນທິດສັງຄົມ ນິຍົມ, ແນວທາງການປ່ຽນແປງໃໝ່ ແລະເປີດປະຕູ. ນອກຈາກນັ້ນ, ໃນເວທີສາກົນ ແລະ ພາກພື້ນ ສອງປະເທດ ລາວ-ຈີນ ກໍ່ໄດ້ຮັກສາ ການປະສານງານກັນຢ່າງໄກ້ຊິດແລະໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ.

ສອງປະເທດໄດ້ລົງນາມຮ່ວມກັນໃນຖະແຫຼງການຮ່ວມ ກ່ຽວກັບການຮ່ວມມືທະວິພາຄີລະຫວ່າງສອງປະເທດໃນວັນທີ 12 ພະຈິກ 2000. ຖະແຫຼງການຮ່ວມດັ່ງກ່າວ ໄດ້ວາງ ແນວທາງການພົວພັນ ແລະ ຮ່ວມມືຂອງທັງສອງປະເທດໃນສັດຕະວັດໃໝ່ ເພື່ອກ້າວໄປສູ່ການ ສ້າງການພົວພັນຮ່ວມມືຮອບດ້ານທີ່ໝັ້ນຄົງຍາວນານ, ມີໄມຕີຈິດຖານບ້ານໄກ້ເຮືອນຄຽງ ແລະ ໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ.

2. **ການແລກປ່ຽນຢ້ຽມຢາມທີ່ສຳຄັນ :**
**(ນັບແຕ່ 1989 ທີ່ມີການພົວພັນອັນເປັນປົກກະຕິນຳກັນເປັນຕົ້ນມາ).**

- **ການຢ້ຽມຢາມ ສປ ຈີນ ຂອງບັນດາຜູ້ນຳລາວ :**

- ທ່ານ ໄກສອນ ພົມວິຫານ, ປະທານສະພາລັດຖະມົນຕີ ໃນເດືອນ 10/1989.
- ທ່ານ ຄຳໄຕ ສີພັນດອນ, ນາຍົກລັດຖະມົນຕີ ໃນປີ 1991 ແລະ 1993.
- ທ່ານ ໄກສອນ ພົມວິຫານ, ປະທານພັກ, ປະທານປະເທດ ໃນເດືອນ 04/1992.
- ທ່ານ ໜູຮັກ ພູມສະຫວັນ, ປະທານພັກ, ປະທານປະເທດ ໃນເດືອນ 05/1995.
- ທ່ານ ສະໝານ ວິຍະເກດ ປະທານສະພາ ໃນເດືອນ 05/1995, 01/2000 ແລະ 12/2005.
- ທ່ານ ສີສະຫວາດ ແກ້ວບຸນພັນ, ນາຍົກລັດຖະມົນຕີ ໃນເດືອນ 01/1999.

- ທ່ານ ຄຳໄຕ ສີພັນດອນ, ປະທານພັກ, ປະທານປະເທດ ໃນເດືອນ 07/2000 ແລະ 06/2003.
- ທ່ານ ບຸນຍັງ ວໍລະຈິດ, ນາຍົກລັດຖະມົນຕີ ໃນເດືອນ 02/2002.
- ທ່ານ ຈູມມະລີ ໄຊຍະສອນ, ປະທານພັກ, ປະທານປະເທດ ໃນເດືອນ 06/2006.
- ທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໃນດືອນ 08/2007.
- ທ່ານ ຈູມມະລີ ໄຊຍະສອນ, ປະທານພັກ, ປະທານປະເທດ ໃນເດືອນ 05/2008.

- **ການຢ້ຽມຢາມ ສປປ ລາວ ຂອງບັນດາຜູ້ນຳຈີນ :**

- ທ່ານ ລີ ເຜີງ, ນາຍົກລັດຖະມົນຕີ ໃນເດືອນ 12/1990.
- ທ່ານ ໂຈ ເຈຍຫວາ, ຮອງນາຍົກລັດຖະມົນຕີ ໃນເດືອນ 11/1992.
- ທ່ານ ສຽນ ສີເຊິນ, ທີ່ປຶກສາແຫ່ງລັດ, ລັດຖະມົນຕີກະຊວງການຕ່າງປະເທດ ໃນເດືອນ 01/1993.
- ທ່ານ ສຽວ ສື, ປະທານທີ່ປຶກສາ ໃນເດືອນ 11/1996.
- ທ່ານ ອູ ປັງກົວ, ຮອງນາຍົກລັດຖະມົນຕີ ໃນເດືອນ 10/1997.
- ທ່ານ ຈຽງ ເຈີມິນ, ປະທານພັກ, ປະທານປະເທດ ໃນເດືອນ 11/2000.
- ທ່ານ ນາງ ອູ ອີ້, ຮອງນາຍົກລັດຖະມົນຕີ ໃນເດືອນ 03/2004.
- ທ່ານ ເວິນ ເຈຍປາວ, ນາຍົກລັດຖະມົນຕີ ໃນເດືອນ 11/2004 (ທັງເຂົ້າຮ່ວມ ASEAN Summit) .
- ທ່ານ ຫູ ຈິນທາວ, ປະທານປະເທດ ໃນເດືອນ 11/2006.
- ທ່ານ ເວິນ ເຈຍປາວ, ນາຍົກລັດຖະມົນຕີ ໃນເດືອນ 03/2008 ( ທັງເຂົ້າຮ່ວມກອງປະຊຸມ GMS).

ນອກຈາກນີ້, ຍັງມີການຢ້ຽມຢາມຈີນເປັນການພາຍໃນ ຂອງຜູ້ນຳສູງສຸດລາວ ແລະ ການຢ້ຽມຢາມຈີນ ຂອງການນຳຂັ້ນ ຮອງນາຍົກ, ລັດຖະມົນຕີ, ຂັ້ນແຂວງ ແລະ ວິຊາການ ຕ່າງໆ ນັບແຕ່ສູນກາງລົງຮອດ ທ້ອງຖິ່ນ ຢ່າງເປັນປົກກະຕິ. ຝ່າຍຈີນ ກໍ່ໄດ້ສົ່ງຄະນະຜູ້ແທນ ຂັ້ນລັດຖະມົນຕີ, ຮອງລັດຖະມົນຕີ ແລະ ວິຊາ ການຂັ້ນ ຕ່າງໆມາຢ້ຽມຢາມລາວ, ພ້ອມກັນນັ້ນ ກໍ່ຍັງໄດ້ສົ່ງຊ່ຽວຊານມາ ປາຖະກະຖາໃນບັນຫາທີ່ສຳຄັນ ຕ່າງໆຢູ່ລາວ.

## 3. ການຮ່ວມມືດ້ານເສດຖະກິດ ແລະ ການລົງທຶນ :

ເຫັນວ່າ ການຮ່ວມມືດ້ານເສດຖະກິດ ແລະ ການລົງທຶນ ໄດ້ເພີ່ມຂຶ້ນຢ່າງໄວວາ, ມາເຖິງປະຈຸບັນນີ້ ສປ ຈີນ ຄອງອັບດັບທີຫນຶ່ງຂອງການລົງທຶນຕ່າງປະເທດ ຢູ່ ສປປ ລາວ.

- **ການຮ່ວມມືດ້ານເສດຖະກິດ-ເຕັກນິກ :**

**ໄລຍະທີ 1** : (ແຕ່ 1959 - 1989) ສປ ຈີນ ໄດ້ຊ່ວຍເຫຼືອ ສປປ ລາວ ລວມມູນຄ່າ ທັງໝົດ 955,6 ລ້ານຢວນ, ໃນນັ້ນ ເງິນກູ້ບໍ່ມີດອກ ເບ້ຍ 99 ລ້ານຢວນ, ເງິນຊ່ວຍເຫຼືອລ້າ 866,6 ລ້ານຢວນ, ໃນການຊ່ວຍ ເຫຼືອລ້າຂ້າງເທິງນີ້ ແມ່ນຝ່າຍຈີນ ເປັນຜູ້ຮັບເໝົາກໍ່ສ້າງ ທັງໝົດ 38 ໂຄງການ, ໃນນັ້ນ ກໍ່ສ້າງສຳລັດ 29 ໂຄງ ການ, ຢຸດເຊົາ 05 ໂຄງການ ແລະ ຍົກເລີກ 04 ໂຄງການ.

ເງິນກູ້ບໍ່ມີດອກເບ້ຍ ມີ 03 ບ້ວງ ລວມ 99 ລ້ານຢວນ ໄດ້ນຳໃຊ້ຕົວຈິງແລ້ວ 49,8 ລ້ານຢວນ ຢູ່ໃນຂັ້ນຕອນສົ່ງຄືນ ແຕ່ຍັງບໍ່ໄດ້ທວງຄືນ. ໃນວັນທີ 17/12/1990 ທັງສອງຝ່າຍ ໄດ້ເຊັນສັນຍາຍົກເລີກ ການນຳໃຊ້ເງິນກູ້ທີ່ບໍ່ໄດ້ນຳໃຊ້ດັ່ງກ່າວ ຈຳນວນ 49,2 ລ້ານຢວນ ແລະ ໃນປີ 2003 ສປ ຈີນ ກໍ່ໄດ້ປະ ກາດຍົກເລີກໜີ້ສິນບ້ວງດັ່ງກ່າວ ແກ່ ສປປ ລາວ ຢ່າງເປັນທາງການ.

**ໄລຍະທີ 2** : (ແຕ່ 1989 - 2000) ລັດຖະບານ ສປ ຈີນ ໄດ້ຊ່ວຍເຫຼືອ ລັດຖະບານ ສປປ ລາວ ລວມ 600,54 ລ້ານຢວນ. ໃນນັ້ນ, ຊ່ວຍເຫຼືອລ້າດ້ານເສດຖະກິດ-ເຕັກນິກ 425,74 ລ້ານຢວນ ເຊິ່ງເປັນ ເງິນຊ່ວຍເຫຼືອລ້າ 115,74 ລ້ານຢວນ, ເງິນກູ້ບໍ່ມີດອກເບ້ຍ 110 ລ້ານຢວນ, ເງິນກູ້ດອກເບ້ຍຕ່ຳ 200 ລ້ານ ຢວນ, ສົ່ງຄືນແລ້ວ 402,75 ລ້ານຢວນ ແລະ ລໍຖ້າ ສົ່ງຄືນ 22,99 ລ້ານຢວນ.

**ໄລຍະທີ 3** : (ແຕ່ 2000 ຮອດປະຈຸບັນ) ສປ ຈີນ ໄດ້ຊ່ວຍເຫຼືອ ສປປ ລາວ ລວມ 1.196 ລ້ານ ຢວນ, ໃນນັ້ນ, ເງິນຊ່ວຍເຫຼືອລ້າ 397,9 ລ້ານ ຢວນ, ເງິນກູ້ບໍ່ມີດອກເບ້ຍ 299 ລ້ານຢວນ, ເງິນກູ້ດອກ ເບ້ຍຕ່ຳ 500 ລ້ານຢວນ.

- **ການຮ່ວມມືດ້ານການຄ້າ :**

ການພົວພັນດ້ານການຄ້າ ລະຫວ່າງ ລາວ-ຈີນ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ສະເລ່ຍບໍ່ຫຼຸດ

100 ລ້ານ ໂດລາສະຫະລັດຕໍ່ປີ.

ສຳລັບປີ 2007 ຍອດມູນຄ່າການການຄ້າ ບັນລຸໄດ້ 219 ລ້ານໂດລາສະຫະລັດ ທຽບໃສ່ໄລຍະ ດຽວກັນຂອງແຕ່ລະປີ. ພິເສດລັດຖະບານຈີນ ໄດ້ໃຫ້ສິດທິພິເສດແກ່ສິນຄ້າລາວ ຈຳນວນ 309 ລາຍການ ( ໃນຂອບການຮ່ວມມືອາຊຽນ ) ເຊິ່ງເປັນປັດໃຈໃຫມ່ໃນການພົວພັນ ຮ່ວມມືດ້ານການຄ້າ ລະຫວ່າງ ສອງ ປະເທດ.

- **ດ້ານການລົງທຶນ :**

ນັບແຕ່ປີ 1990 ເຖິງ ເດືອນມີນາ 2006 ສປ ຈີນ ໄດ້ເຂົ້າມາລົງທຶນຢູ່ ສປປ ລາວ ມີຈຳນວນ 219 ໂຄງການ ລວມມູນຄ່າປະມານ 593,6 ລ້ານໂດລາສະຫະລັດ ໃນ 12 ຂະແໜງການ ເຊິ່ງໄດ້ແກ່ :

| | | | | |
|---|---|---|---|---|
| 1. | ຂະແໜງອຸດສາຫະກຳ ແລະ ຫັດຖະກຳ | ຈຳນວນ | 56 | ໂຄງການ. |
| 2. | ຂະແໜງບໍ່ແຮ່ | ຈຳນວນ | 28 | ໂຄງການ. |
| 3. | ຂະແໜງການຄ້າ | ຈຳນວນ | 27 | ໂຄງການ. |
| 4. | ຂະແໜງບໍລິການ | ຈຳນວນ | 26 | ໂຄງການ. |
| 5. | ຂະແໜງກະສິກຳ | ຈຳນວນ | 25 | ໂຄງການ. |
| 6. | ຂະແໜງການຕັດຫຍິບ | ຈຳນວນ | 15 | ໂຄງການ. |
| 7. | ຂະແໜງໂຮງແຮມ ແລະ ຮ້ານອາຫານ | ຈຳນວນ | 14 | ໂຄງການ. |
| 8. | ຂະແໜງກໍ່ສ້າງ | ຈຳນວນ | 10 | ໂຄງການ. |
| 9. | ຂະແໜງອຸດສາຫະກຳໄມ້ | ຈຳນວນ | 09 | ໂຄງການ. |
| 10. | ຂະແໜງທີ່ປຶກສາ | ຈຳນວນ | 04 | ໂຄງການ. |
| 11. | ຂະແໜງພະລັງງານ | ຈຳນວນ | 03 | ໂຄງການ. |
| 12. | ຂະແໜງໂທລະຄົມ | ຈຳນວນ | 02 | ໂຄງການ. |

- **ການຮ່ວມມືໃນຂອບ** Greater Mekong Subregion ( GMS) :

1. ໂຄງການກໍ່ສ້າງທາງຫຼວງ ຄຸນໝິງ - ບາງກອກ ໄລຍະທາງຜ່ານລາວຍາວທັງໝົດ 228,3 ກລມ ເຊິ່ງ ແບ່ງອອກເປັນ 03 ຊ່ວງ. ຊ່ວງທີ 1, ຍາວ 69,44 ກລມ ໄດ້ທຶນກໍ່ສ້າງ ຈາກລັດຖະບານຈີນ ຈຳນວນ 30 ລ້ານໂດລາ. ໃນນັ້ນ, ເງິນຊ່ວຍເຫຼືອລ້າ 06 ລ້ານ ໂດລາ (60 ລ້ານຢວນ) ແລະ ເງິນກູ້ບໍ່ມີດອກ ເບ້ຍ 24 ລ້ານໂດລາ (119 ລ້ານຢວນ).

2. ໂຄງການປັບປຸງຄອງເດີນເຮືອຕາມລຳແມ່ນ້ຳຂອງຕອນເໜືອ(ຊາຍແດນລາວ-ມຽນມາ) ລັດຖະບານ ຈີນ ຊ່ວຍເຫຼືອ 05 ລ້ານໂດລາ.

- **ບັນດາໂຄງການທີ່ຝ່າຍຈີນຊ່ວຍເຫຼືອ ແລະ ສະເໜີໃຫ້ຊ່ວຍເຫລືອ :**

1. ໂຄງການກໍ່ສ້າງນັກວິຊາການການບິນ ເພື່ອເຝິກແອບນັກບິນເຮລິກົບແຕ ກ່ຽວກັບ ກວດກາ ຊາຍແດນ, ຕ້ານການຄ້າຢາເສບຕິດ ແລະ ການກໍ່ອາສະຍາກຳຂ້າມຊາດ ຕິດພັນກັບເງິນຊື້ເຮືອ ບິນເຮລິກົບແຕ Z9 ຈຳນວນ 4 ລຳ.
2. ໂຄງການສ້າງຂົວມິດຕະພາບແຫ່ງທີ່ 3 ຕາມເສັ້ນທາງ ຄຸນມິງ-ບາງກອກ ທີ່ແຂວງ ບໍ່ແກ້ວ.
3. ໂຄງການສ້າງສູນແບບຢ່າງທາງກະສິກຳ ຢູ່ແຂວງອຸດົມໄຊ.

ນະຄອນຫຼວງວຽງຈັນ, ວັນທີ 24 ພຶດສະພາ2008

ກົມ ອປອ, ໂຕະ ສປ ຈີນ